Australian Government

COVID-19 VACCINATION

# ຂໍ້ມູນກ່ຽວກັບຢາວັກຊີນຕ້ານ COVID-19 Spikevax (Moderna)

ອັບເດດຄັ້ງລ່າສຸດ: 15 ກັນຍາ 2021

## ກ່ຽວກັບຢາວັກຊີນຊະນິດນີ້

**Moderna** ແມ່ນຢາວັກຊີນທີ່ສາມາດປ້ອງກັນຄົນບໍ່ໃຫ້ເຈັບປ່ວຍຍ້ອນພະຍາດ COVID-19. ການສັກຢາຕ້ອງໄດ້ ສັກສອງໂດສ, ຕາມປົກກະຕິແມ່ນສັກຫ່າງກັນ 4-6 ອາທິດ (ໃນກໍລະນີພິເສດລະຍະຫ່າງກັນອາດຈະດົນກວ່ານີ້). ຢາວັກຊີນ Moderna COVID-19 ບໍ່ມີສ່ວນປະກອບທີ່ເປັນເຊື້ອໄວຣັສທີ່ມີຊີວິດແຕ່ຢ່າງໃດ, ແລະມັນບໍ່ສາມາດເອົາເຊື້ອ COVID-19 ໃຫ້ທ່ານ. ຢານີ້ປະກອບດ້ວຍລະຫັດພັນທຸກໍາສໍາລັບພາກສ່ວນສໍາຄັນຂອງເຊື້ອໄວຣັສ SARS-CoV-2 ເຊິ່ງເອີ້ນວ່າໂປຣຕີນທີ່ແຫຼມຄົມ. ຫຼັງຈາກໄດ້ຮັບການສັກວັກຊີນແລ້ວ, ຮ່າງກາຍຂອງທ່ານກໍຈະ ເຮັດກອບປີ້ໂປຣຕີນທີ່ແຫຼມຄົມນີ້ຂຶ້ນມາ. ຫຼັງຈາກນັ້ນ ລະບົບພູມຄຸ້ມກັນຂອງ ທ່ານກໍຈະຮຽນຮູ້ເພື່ອໃຫ້ຮູ້ຈັກແລະຕໍ່ສູ້ ກັບເຊື້ອໄວຣັສ SARS-CoV-2, ທີ່ເປັນສາເຫດໃຫ້ເກີດ COVID-19. ລະຫັດພັນທຸກໍານັ້ນຈະແຍກສະຫຼາຍຕົວ ໂດຍໄວໂດຍຮ່າງກາຍຂອງຄົນ.

ເພື່ອປ້ອງກັນຕົນເອງຈາກ COVID-19, ທຸກໆຄົນທີ່ມີສິດໄດ້ຮັບການສັກຢາວັກຊີນຕ້ານ COVID-19 ຄວນໄປຮັບ ການສັກຢາ, ໂດຍມີຂໍ້ຍົກເວັ້ນບາງຢ່າງດັ່ງທີ່ໄດ້ລະບຸໄວ້ໃນເຈ້ຍຂໍ້ມູນນີ້. ການສັກຢາວັກຊີນແມ່ນເປັນການສະໝັກໃຈ. ທ່ານສາມາດປຶກສາໃນເລື່ອງທີ່ທ່ານກັງວົນຫຼືຄໍາຖາມໃດໆກ່ຽວກັບການສັກວັກຊີນຕ້ານ COVID-19 ກັບຜູ້ທີ່ ໃຫ້ການສັກຢາແກ່ທ່ານ ແລະ/ຫຼື ທ່ານໝໍ GP ຂອງທ່ານກ່ອນຮັບການສັກຢາ.

## ຜົນປະໂຫຍດຂອງຢາວັກຊີນ

ການທົດລອງທາງຄລີນິກຢ່າງກວ້າງຂວາງໄດ້ສະແດງໃຫ້ເຫັນວ່າ Moderna ໃຊ້ໄດ້ຜົນດີໃນການປ້ອງກັນ COVID-19 ໃນຜູ້ທີ່ມີອາຍຸ ≥12 ປີແລະໃຫຍ່ກວ່າ. ຜູ້ໃຫຍ່ທີ່ໄດ້ສັກຢາ Moderna ສອງໂດສ ຈະມີ 94 ເປີເຊັນ ນ້ອຍລົງໃນການທີ່ຈະເຈັບປ່ວຍຈາກພະຍາດ COVID-19 ກວ່າຜູ້ທີ່ບໍ່ໄດ້ສັກຢາວັກຊີນ. ຢາວັກຊີນນີ້ ກໍໃຊ້ໄດ້ຜົນດີ ເຊັ່ນກັນກັບຜູ້ທີ່ມີອາຍຸເກີນ 65 ປີ (86%) ແລະໃນກຸ່ມຊາວໜຸ່ມທີ່ມີອາຍຸ 12-17 ປີ.

ການປົກປ້ອງຈາກພະຍາດ COVID-19 ຈະເລີ່ມຈາກປະມານສອງອາທິດຫຼັງຈາກສັກຢາໂດສທີ່ໜຶ່ງແລ້ວ. ໃນຂະນະທີ່ຢາໂດສໜຶ່ງອາດຈະໃຫ້ການປົກປ້ອງໄດ້ເປັນບາງລະດັບ, ແຕ່ວ່າມັນອາດຈະກຸ້ມຢູ່ໄດ້ເປັນພຽງລະຍະສັ້ນ. ການສັກສອງໂດສຈະໃຫ້ການປົກປ້ອງທີ່ໄດ້ຜົນຢ່າງເຕັມທີ່. ບໍ່ມີຢາວັກຊີນຊະນິດທີ່ຈະໄດ້ຜົນເຕັມ 100 ເປີເຊັນ, ສະນັ້ນ ຈຶ່ງເປັນໄປໄດ້ວ່າທ່ານອາດຈະຍັງຕິດເຊື້ອແລະເຈັບປ່ວຍຈາກ COVID-19ໄດ້ ຫຼັງຈາກສັກຢາແລ້ວ. ພວກເຮົາຍັງບໍ່ຮູ້ວ່າການປົກປ້ອງຈາກ Moderna ຈະກຸ້ມໄດ້ດົນປານໃດ. ເຮົາອາດຮຽນຮູ້ໄດ້ຕື່ມກ່ຽວກັບເລື່ອງນີ້ເມື່ອເວລາຜ່ານໄປ. ປັດຈຸບັນນີ້ ພວກເຮົາກໍຍັງບໍ່ຮູ້ແນ່ນອນວ່າບັນດາຢາວັກຊີນຕ້ານ COVID-19 ຈະໄດ້ຜົນດີປານໃດໃນ ການປ້ອງກັນບໍ່ໃຫ້ມີການແພ່ຜາຍຂອງເຊື້ອໄວຣັສ. ອັນນີ້ ໝາຍຄວາມວ່າ ແມ່ນແຕ່ຜູ້ທີ່ສັກຢາວັກຊີນແລ້ວກໍຍັງ

ອາດຈະຍັງຕິດເຊື້ອໄວຣັສທີ່ກໍ່ໃຫ້ເກີດ COVID-19 ໄດ້ຢູ່ ແລະ ເຖິງແມ່ນວ່າເຂົາເຈົ້າຈະບໍ່ມີອາການຫຍັງຫຼືມີອາການພຽງເບົາບາງ, ເຂົາເຈົ້າກໍຍັງສາມາດທີ່ຈະແພ່ເຊື້ອໃຫ້ຄົນອື່ນໄດ້.

ສະນັ້ນ ຈຶ່ງເປັນສິ່ງສຳຄັນທີ່ຕ້ອງສືບຕໍ່ໃຊ້ມາດຕະການປ້ອງກັນຢ່າງອື່ນ ເຊັ່ນວ່າ:

- ການຢູ່ລະຍະຫ່າງກັນກັບຄົນອື່ນ
- ລ້າງມື
- ໃສ່ໜ້າກາກ
- ໄປກວດຫາ COVID-19 ແລະ ກັກໂຕ/ແຍກປ່ຽວ ຕາມທີ່ທາງລັດຖະບານປະຈຳລັດ/ເຂດປົກຄອງ ອອກກົດລະບຽບໄວ້.

ຖ້າທ່ານໄດ້ສັກຢາ Moderna ຄົບສອງໂດສແລ້ວ, ທ່ານກໍຍັງຈະຕ້ອງໄປກວດຫາເຊື້ອ COVID-19 ຢູ່ ຖ້າທ່ານມີອາການຕ່າງໆ ທີ່ເຂົ້າເງື່ອນໄຂວ່າຕ້ອງໄປກວດ ຕາມທີ່ທາງການສາທະລະນະສຸກໃນເຂດທ້ອງຖິ່ນຂອງທ່ານໄດ້ລະບຸໄວ້ (ເຊັ່ນ ເປັນໄຂ້, ໄອ, ເຈັບຄໍ).

## ແມ່ນໃຜສາມາດໄດ້ຮັບການສັກຢາວັກຊີນນີ້

ຄະນະກຳມະການຄຸ້ມຄອງສິນຄ້າທີ່ໃຊ້ໃນການປິ່ນປົວ (TGA) ໄດ້ອະນຸມັດເປັນການຊົ່ວຄາວໃຫ້ສາມາດນຳໃຊ້ຢາ Spikevax (Moderna) ກັບຜູ້ທີ່ມີອາຍຸ ≥ 12 ປີ.

## ແມ່ນໃຜບໍ່ຄວນຮັບການສັກຢານີ້

ທ່ານບໍ່ຄວນຮັບການສັກຢາວັກຊີນຊະນິດນີ້ ຖ້າວ່າທ່ານ:

- ມີອາການພູມແພ້ຢ່າງແຮງ (anaphylaxis) (ປະຕິກິລິຍາພູມແພ້ຢ່າງແຮງຊະນິດໜຶ່ງ) ຕໍ່ການສັກຢາວັກຊີນ mRNA COVID-19 ໂດສກ່ອນ (ເຊັ່ນ Moderna ຫຼື Comirnaty (Pfizer))
- ມີອາການພູມແພ້ຢ່າງແຮງ ຫຼັງຈາກໄດ້ສຳຜັດກັບພາກສ່ວນໃດໜຶ່ງຂອງຢາວັກຊີນ, ລວມເຖິງ polyethylene glycol (PEG)
- ເປັນພະຍາດກ້າມຊີ້ນຫົວໃຈອັກເສບ (myocarditis) ແລະ/ຫຼື ເຫຍື່ອຫຸ້ມຫົວໃຈອັກເສບ (pericarditis) ທີ່ເກີດຂຶ້ນຈາກການສັກຢາວັກຊີນ mRNA COVID-19 ໂດສກ່ອນ (ເຊັ່ນ Moderna ຫຼື Pfizer)
- ມີອາການສົນທີ່ຮ້າຍແຮງ, ເຊິ່ງ ຜູ້ໃຫ້ການສັກຢາກັນພະຍາດທີ່ມີປະສົບການຊ່ຽວຊານ ຫຼື ແພດຊ່ຽວຊານໄດ້ລົງຄວາມເຫັນວ່າເກີດຂຶ້ນເມື່ອສັກຢາວັກຊີນ mRNA COVID-19 ໂດສກ່ອນ (ເຊັ່ນ Moderna ຫຼື Pfizer) ແລະບໍ່ສາມາດລະບຸໄດ້ວ່າມາຈາກສາເຫດອື່ນ.

## ຄວາມລະມັດລະວັງໃນການສັກຢາວັກຊີນ

ຜູ້ທີ່ມີພາວະທາງສຸຂະພາບບາງຢ່າງອາດຕ້ອງມີຄວາມລະມັດລະວັງຂຶ້ນ ເຊັ່ນຕ້ອງຢູ່ຕື່ມອີກ 30 ນາທີ ເພື່ອສັງເກດເບິ່ງອາການຫຼັງຈາກສັກຢາວັກຊີນຫຼືປຶກສາກັບແພດຊ່ຽວຊານດ້ານພູມແພ້. ໃຫ້ບອກຜູ້ສັກຢາໃຫ້ຮູ້ຖ້າວ່າທ່ານມີ:

- **ປະຕິກິລິຍາພູມແພ້ຕໍ່ວັກຊີນໂດສກ່ອນ** ຫຼື ຕໍ່ສ່ວນປະກອບຂອງຢາວັກຊີນ mRNA COVID-19 (ເຊັ່ນ Moderna ຫຼື Pfizer)
- **ມີປະຕິກິລິຍາພູມແພ້ຢ່າງແຮງ (anaphylaxis) ຕໍ່ຢາວັກຊີນຊະນິດອື່ນຫຼືຕໍ່ຢາປົວພະຍາດຊະນິດອື່ນ.** ຜູ້ສັກຢາໃຫ້ທ່ານສາມາດກວດເບິ່ງເພື່ອໃຫ້ແນ່ໃຈວ່າບໍ່ມີສ່ວນປະກອບອັນດຽວກັນຢູ່ໃນຢາວັກຊີນຕ້ານ COVID-19 ທີ່ທ່ານກຳລັງຈະໄດ້ຮັບ
- ໄດ້ຖືກແພດບົ່ງມະຕິວ່າທ່ານເຄີຍເປັນພະຍາດພູມແພ້ (mastocytosis) ທີ່ເຮັດໃຫ້ເກີດອາການພູມແພ້ຢ່າງແຮງຊ້ຳຊ້ອນທີ່ຕ້ອງປິ່ນປົວ

ຖ້າ **ທ່ານມີພະຍາດກ່ຽວເລືອດໄຫຼອອກຜິດປົກກະຕິ** ຫຼືທ່ານກຳລັງ **ກິນຢາເຮັດໃຫ້ເລືອດໃສ** (ຢາລະລາຍລີ້ມເລືອດ), ໃຫ້ບອກຜູ້ສັກຢາໃຫ້ທ່ານ. ຜູ້ສັກຢາໃຫ້ທ່ານສາມາດຊ່ວຍທ່ານຕັດສິນໃຈໄດ້ວ່າຈະເປັນການປອດໄພຕໍ່ທ່ານບໍໃນການສັກຢາເຂົ້າກ້າມຊີ້ນ, ແລະ ຊ່ວຍທ່ານຕັດສິນໃຈວ່າເວລາໃດດີທີ່ສຸດສຳລັບການສັກຢາ.

## ສະພາວະພິເສດທີ່ຕ້ອງປຶກສາກ່ອນສັກຢາວັກຊີນ

### ຄົນທີ່ມີພາວະທີ່ຄວນລະມັດລະວັງສຳລັບ Moderna

ຜູ້ທີ່ມີປະຫວັດເຄີຍມີພາວະຕ່າງໆດັ່ງຂ້າງລຸ່ມນີ້ສາມາດໄດ້ຮັບການສັກຢາ Moderna ແຕ່ວ່າຄວນຂໍຄຳແນະນຳຈາກ GP, ແພດຊ່ຽວຊານດ້ານການສັກຢາກັນພະຍາດ ຫຼື ແພດຊ່ຽວຊານດ້ານຫົວໃຈ ເພື່ອໃຫ້ຮູ້ວ່າເວລາໃດ ດີທີ່ສຸດໃນການສັກຢາແລະຕ້ອງມີການລະມັດລະວັງຫຍັງເພີ່ມເຕີມບໍ:

- ເມື່ອໝໍ່ໆມານີ້ (ເຊັ່ນ ພາຍໃນຫົກເດືອນຜ່ານມາ) ຫຼືໃນປັດຈຸບັນ ໄດ້ເປັນພະຍາດຫົວໃຈອັກເສບ ເຊັ່ນ ກ້າມຊີ້ນຫົວໃຈອັກເສບ (myocarditis), ຖົງຫຸ້ມຫົວໃຈອັກເສບ (pericarditis), ເຫຍື່ອຫົວໃຈອັກເສບ (endocarditis)
- ອາການໄຂ້ rheumatic ກະທັນຫັນ (ເຊັ່ນ ເປັນພະຍາດກ້າມຊີ້ນຫົວໃຈອັກເສບ) ຫຼື ເປັນພະຍາດຫົວໃຈ rheumatic ກະທັນຫັນ
- ອາການຫົວໃຈລົ້ມເຫຼວແບບກະທັນຫັນທີ່ບໍ່ສາມາດປິ່ນປົວໃຫ້ດີຄືນໄດ້

## ຜູ້ທີ່ມີພູມຄຸ້ມກັນຕໍ່າ (ພູມຄຸ້ມກັນບົກພ່ອງ)

ຜູ້ທີ່ມີພູມຄຸ້ມກັນບົກພ່ອງ ລວມມີ ຜູ້ທີ່ມີພາວະທາງສຸຂະພາບທີ່ເຮັດໃຫ້ລະບົບພູມຄຸ້ມກັນຕໍ່າລົງ. ອັນນີ້ ລວມເຖິງຜູ້ທີ່ອາດຈະກິນຢາທີ່ໄປກົດລະບົບພູມຄຸ້ມກັນໃຫ້ອ່ອນແອລົງ.

ລັດຖະບານອອສເຕຣເລຍໄດ້ແນະນໍາຢ່າງແຂງຂັນວ່າໃຫ້ຜູ້ທີ່ມີພູມຄຸ້ມກັນບົກພ່ອງຈົ່ງໄປຮັບການສັກຢາຕ້ານ COVID-19. Moderna ບໍ່ແມ່ນຢາວັກຊີນທີ່ປະກອບດ້ວຍເຊື້ອໄວຣັສທີ່ມີຊີວິດ. ຢານີ້ປອດໄພສໍາລັບຜູ້ທີ່ມີພູມຄຸ້ມກັນບົກພ່ອງ.

ຜູ້ທີ່ມີພູມຄຸ້ມກັນບົກພ່ອງ, ລວມເຖິງຜູ້ທີ່ມີເຊື້ອ HIV, ມີຄວາມສ່ຽງສູງກວ່າທີ່ຈະເຈັບປ່ວຍຢ່າງຮ້າຍແຮງຈາກ COVID-19, ລວມເຖິງຄວາມສ່ຽງສູງກວ່າໃນການເສຍຊີວິດ.

ການທົດລອງທາງດ້ານຄລີນິກສໍາລັບ Moderna ບໍ່ໄດ້ລວມເອົາຄົນທີ່ມີພູມຄຸ້ມກັນບົກພ່ອງ, ນອກຈາກກຸ່ມນ້ອຍໆ ກຸ່ມໜຶ່ງຂອງຜູ້ທີ່ມີເຊື້ອ HIV ທີ່ອາການຄົງຕົວແລ້ວ, ເຮົາຍັງບໍ່ຮູ້ວ່າ Moderna ຈະໃຊ້ໄດ້ຜົນດີປານໃດໃນກຸ່ມຄົນທີ່ມີພູມຄຸ້ມກັນບົກພ່ອງເມື່ອທຽບໃສ່ປະຊາກອນອື່ນໆທົ່ວໄປ. ເປັນສິ່ງສໍາຄັນທີ່ຕ້ອງສືບຕໍ່ໃຊ້ມາດຕະການປ້ອງກັນອື່ນໆ ເຊັ່ນການຢູ່ລະຍະຫ່າງກັນກັບຄົນອື່ນຫຼັງຈາກສັກຢາວັກຊີນແລ້ວ.

## ແມ່ຍິງຖືພາຫຼືແມ່ຍິງທີ່ລ້ຽງລູກດ້ວຍນົມແມ່

ແມ່ຍິງແລະຍິງໜຸ່ມໄວຮຸ່ນທີ່ຖືພາ ຄວນໄດ້ຮັບການສັກຢາຕ້ານ COVID-19 ທີ່ມີພື້ນຖານການຜະລິດແບບ mRNA, Pfizer ຫຼື Moderna, ບໍ່ວ່າໃນລະຍະໃດຂອງການຖືພາ. ຖ້າທ່ານກໍາລັງພະຍາຍາມທີ່ຈະຖືພາ ທ່ານບໍ່ຈໍາເປັນຕ້ອງເລື່ອນການສັກຢາວັກຊີນ ຫຼື ຫຼີກລ່ຽງການຖືພາຫຼັງຈາກສັກຢາວັກຊີນແລ້ວ.

ແມ່ຍິງຖືພາທີ່ຕິດເຊື້ອ COVID-19 ມີຄວາມສ່ຽງສູງຂຶ້ນໃນການທີ່ຈະເຈັບປ່ວຍຮ້າຍແຮງແລະມີການຖືພາທີ່ມີບັນຫາ. ຫຼັກຖານໃນໂລກຕົວຈິງໄດ້ສະແດງໃຫ້ເຫັນວ່າ Moderna ປອດໄພສໍາລັບແມ່ຍິງຖືພາແລະແມ່ຍິງທີ່ລ້ຽງລູກດ້ວຍນົມແມ່, ທ່ານສາມາດປຶກສາເລື່ອງການຕັດສິນໃຈກ່ຽວກັບເວລາທີ່ເໝາະສົມໃນການສັກຢາວັກຊີນກັບແພດດູແລສຸຂະພາບຂອງທ່ານ.

ຖ້າທ່ານກໍາລັງລ້ຽງລູກດ້ວຍນົມແມ່, ທ່ານກໍສາມາດຮັບການສັກຢາ Moderna ໄດ້. ທ່ານບໍ່ຈໍາເປັນຕ້ອງຢຸດໃຫ້ລູກກິນນົມແມ່ຫຼັງຈາກສັກຢາວັກຊີນແລ້ວ.

## ຜູ້ທີ່ມີປະຫວັດຕິດເຊື້ອ COVID-19

ຖ້າທ່ານເຄີຍຕິດເຊື້ອ COVID-19 ມາກ່ອນ, ໃຫ້ບອກຜູ້ສັກຢາໃຫ້ຮູ້. ຜູ້ສັກຢາໃຫ້ທ່ານອາດຈະໃຫ້ຄໍາແນະນໍາວ່າໃຫ້ທ່ານລໍຖ້າໄປຈົນຮອດຫົກເດືອນຫຼັງຈາກຫາຍຈາກພະຍາດແລ້ວຈຶ່ງມາຮັບການສັກຢາວັກຊີນຕ້ານ COVID-19 ໄດ້. ຖ້າທ່ານກໍາລັງເຈັບປ່ວຍຍ້ອນ COVID-19 ຢູ່, ໃຫ້ປຶກສາກັບທ່ານໝໍທີ່ປິ່ນປົວທ່ານວ່າເວລາໃດເປັນເວລາທີ່ດີທີ່ສຸດທີ່ຈະໄປຮັບການສັກຢາວັກຊີນ.

## Moderna ແລະ ເດັກນ້ອຍ

Moderna ໄດ້ຖືກອະນຸມັດເປັນການຊົ່ວຄາວວ່າໃຫ້ໃຊ້ໄດ້ກັບຄົນທີ່ມີອາຍຸ ≥ 12 ປີ ຫຼື ໃຫຍ່ກວ່າ, ແລະບໍ່ສາມາດສັກໃຫ້ຄົນທີ່ມີອາຍຸຕໍ່າກວ່ານັ້ນ.

## ການຮັບປະກັນຄວາມປອດໄພຂອງ Moderna

Moderna ແລະຢາວັກຊີນຕ້ານ COVID-19 ຊະນິດອື່ນໆແມ່ນໄດ້ຖືກພັດທະນາຂຶ້ນມາຢ່າງໄວຍ້ອນວ່າໄດ້ມີການໃຫ້ທຶນອຸປະຖໍາທີ່ຫຼາຍຂຶ້ນສໍາລັບການວິໄຈຄົ້ນຄວ້າເລື່ອງວັກຊີນ, ແລະ ການເຂົ້າເຖິງຈໍານວນຜູ້ອາສາສະໝັກສໍາລັບການວິໄຈຄົ້ນຄວ້າກໍມີຈໍານວນຫຼວງຫຼາຍ. ການວິໄຈທົດລອງທາງຄລີນິກຄັ້ງໃຫຍ່ເຊິ່ງປະກອບດ້ວຍຄົນປະມານ 30,000 ຄົນໄດ້ຢັ້ງຢືນວ່າ Moderna ປອດໄພແລະມີປະສິດທິພາບ.

TGA ເປັນຜູ້ປະເມີນເບິ່ງຢາວັກຊີນທຸກຊະນິດໃນອອສເຕຣເລຍ. ທັງນີ້ ເພື່ອເປັນການຮັບປະກັນວ່າ, ກ່ອນທີ່ຢາວັກຊີນຈະຖືກອະນຸມັດ, ມັນຕ້ອງປອດໄພ, ມີປະສິດທິພາບ ແລະ ຜະລິດດ້ວຍມາດຕະຖານທີ່ມີຄຸນນະພາບສູງຢ່າງຍິ່ງ. ການບັນລະຍາຍຂັ້ນຕອນໃນການອະນຸມັດບັນດາຢາວັກຊີນຕ້ານ COVID-19 ມີໄວ້ໃຫ້ທີ່ TGA website.

ຄວາມປອດໄພຂອງຢາວັກຊີນຕ້ານ COVID-19 ຈະໄດ້ຖືກຕິດຕາມເບິ່ງຢ່າງຕໍ່ເນື່ອງໂດຍຜ່ານໂຄງການຢາວັກຊີນຕ້ານ COVID-19.

ໄດ້ມີລາຍງານເຖິງອາການຂ້າງຄຽງທີ່ເກີດຂື້ນໄດ້ຍາກ ທີ່ກ່ຽວພັນກັບພາວະເລືອດອຸດຕັນຍ້ອນຈຳນວນເມັດເລືອດນ້ອຍຕ່ຳ ຫຼັງຈາກໄດ້ຮັບການສັກຢາວັກຊີນ Vaxzevria (AstraZeneca). ຢາວັກຊີນ AstraZeneca ໄດ້ຜະລິດຂື້ນມາໂດຍວິທີການທີ່ແຕກຕ່າງກັນກັບ Moderna. ບໍ່ມີຫຼັກຖານຂອງພາວະດັ່ງກ່າວນີ້ ທີ່ເຊື່ອມໂຍງກັບຢາວັກຊີນ Moderna COVID-19.

ທ່ານສາມາດລາຍງານອາການຂ້າງຄຽງທີ່ສົງໃສ ກັບຜູ້ສັກຢາໃຫ້ທ່ານຫຼືແພດດູແລສຸຂະພາບຄົນອື່ນໆ. ຫຼັງຈາກນັ້ນເຂົາເຈົ້າຈະເຮັດລາຍງານຢ່າງເປັນທາງການຕາງໜ້າທ່ານຫາກະຊວງສາທາລະນະສຸກຢູ່ໃນລັດຫຼືເຂດປົກຄອງຂອງທ່ານ ຫຼື ລາຍງານໂດຍຕົງຫາ TGA.

ຖ້າທ່ານປະສົງຢາກເຮັດລາຍງານດ້ວຍຕົນເອງ, ກະລຸນາເຂົ້າໄປທີ່ TGA website ສຳລັບຂໍ້ມູນເຖິງວິທີລາຍງານອາການຂ້າງຄຽງທີ່ກ່ຽວພັນກັບບັນດາຢາວັກຊີນຕ້ານ COVID-19.